ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 0332 /ອຄ

ນະຄອນຫຼວງວຽງຈັນ, ວັນທີ 22 ມີນາ 2022

# ຄຳແນະນຳ
# ກ່ຽວກັບ ການສົ່ງອອກຜະລິດຕະພັນໄມ້ທຳມະຊາດໄປຕ່າງປະເທດ

- ອີງຕາມ ກົດໝາຍວ່າດ້ວຍປ່າໄມ້ ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019;
- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 604/ນຍ, ລົງວັນທີ 15 ຕຸລາ 2021;
- ອີງຕາມ ຄຳສັ່ງວ່າດ້ວຍການອຳນວຍຄວາມສະດວກໃຫ້ແກ່ການນຳເຂົ້າ-ສົ່ງອອກ, ການນຳເຂົ້າຊົ່ວຄາວ, ການຜ່ານແດນ ແລະ ການເຄື່ອນຍ້າຍ ສິນຄ້າ ຢູ່ ສປປ ລາວ ສະບັບເລກທີ 12/ນຍ, ລົງວັນທີ 16 ຕຸລາ 2019;
- ອີງຕາມ ໜັງສືສະເໜີຂອງກົມການນຳເຂົ້າ ແລະ ສົ່ງອອກ ສະບັບເລກທີ 0911/ກຂອ, ລົງວັນທີ 10 ມີນາ 2022.

ເພື່ອສົ່ງເສີມການຜະລິດ, ປຸງແຕ່ງໄມ້ໃຫ້ກາຍເປັນສິນຄ້າ ແລະ ເພີ່ມທະວີການຄຸ້ມຄອງຕິດຕາມ ແຫຼ່ງທີ່ມາຂອງໄມ້ໃຫ້ຖືກຕ້ອງ ຕາມລະບຽບກົດໝາຍ, ພ້ອມທັງສ້າງເງື່ອນໄຂອຳນວຍຄວາມສະດວກ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ໃນການຈັດຕັ້ງປະຕິບັດເງື່ອນໄຂ, ຂັ້ນຕອນ, ວິທີການ ແລະ ມາດຕະການ ຕໍ່ການສົ່ງອອກໄມ້ທຳມະຊາດໄປຕ່າງປະເທດ.

### ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ອອກຄຳແນະນຳ:

## I. ຊະນິດ ຜະລິດຕະພັນໄມ້ທຳມະຊາດ ທີ່ສົ່ງອອກຕ່າງປະເທດ

ການສົ່ງອອກຜະລິດຕະພັນໄມ້ທຳມະຊາດໄປຕ່າງປະເທດ ແມ່ນການສົ່ງອອກຜະລິດຕະພັນໄມ້ ທີ່ນຳໃຊ້ວັດຖຸດິບຈາກປ່າທຳມະຊາດ ເພື່ອປຸງແຕ່ງເປັນຜະລິດຕະພັນ ຕາມຂໍ້ຕົກລົງ ວ່າດ້ວຍການຮັບຮອງເອົາລາຍການຜະລິດຕະພັນໄມ້ເພື່ອສົ່ງອອກ ທີ່ກະຊວງອຸດສາຫະກຳ ແລະ ການຄ້າ ໄດ້ຮັບຮອງ ແລະ ປະກາດໃຊ້ໃນແຕ່ລະໄລຍະ.

ການກຳນົດຊະນິດໄມ້ ແມ່ນໃຫ້ຖືເອົາຕາມ ຂໍ້ຕົກລົງວ່າດ້ວຍການກຳນົດບັນຊີໄມ້ I, II, III ທີ່ ກະຊວງກະສິກຳ ແລະ ປ່າໄມ້ ໄດ້ຮັບຮອງ ແລະ ປະກາດໃຊ້ໃນແຕ່ລະໄລຍະ.

## II. ເງື່ອນໄຂຂອງຜູ້ສົ່ງອອກຜະລິດຕະພັນໄມ້ທຳມະຊາດ

ຜູ້ສົ່ງອອກຜະລິດຕະພັນໄມ້ທຳມະຊາດ ຕ້ອງມີເງື່ອນໄຂດັ່ງນີ້:

1. ຕ້ອງເປັນຜູ້ດຳເນີນກິດຈະການໃດໜຶ່ງ ດັ່ງນີ້:
   1.1. ດຳເນີນກິດຈະການປຸງແຕ່ງໄມ້;
   1.2. ດຳເນີນກິດຈະການນຳເຂົ້າ-ສົ່ງອອກ ດ້ານກະສິກຳ ແລະ ປ່າໄມ້.
2. ຕ້ອງປະຕິບັດພັນທະຕໍ່ລັດຢ່າງຄົບຖ້ວນ ຕາມລະບຽບກົດໝາຍ;
3. ຕ້ອງມີລະບົບການຄຸ້ມຄອງ ແລະ ຕິດຕາມໄມ້ສົ້ນເຂົ້າ ແລະ ສົ້ນອອກ.

## III. ການສົ່ງອອກຜະລິດຕະພັນໄມ້ທຳມະຊາດ

### ກ. ຂັ້ນຕອນສົ່ງອອກຜະລິດຕະພັນໄມ້ທຳມະຊາດ

ການສົ່ງອອກຜະລິດຕະພັນໄມ້ທຳມະຊາດໄປຕ່າງປະເທດ ຕ້ອງສົ່ງອອກຜ່ານດ່ານສາກົນເທົ່ານັ້ນ ແລະ ປະກອບມີ ສອງ ຂັ້ນຕອນ ຄື:

1. ການຂໍໃບອະນຸຍາດສົ່ງອອກຜະລິດຕະພັນໄມ້ທຳມະຊາດ;
2. ການແຈ້ງເອກະສານຢູ່ດ່ານ.

### ຂ. ການຂໍອະນຸຍາດສົ່ງອອກຜະລິດຕະພັນໄມ້ທຳມະຊາດ

**1. ການປະກອບເອກະສານ**

ຜູ້ທີ່ມີຈຸດປະສົງຢາກສົ່ງອອກຜະລິດຕະພັນໄມ້ທຳມະຊາດ ຕ້ອງປະກອບເອກະສານ ຍື່ນຕໍ່ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ (ໂດຍແມ່ນຂະແໜງການນຳເຂົ້າ ແລະ ສົ່ງອອກ ເປັນຜູ້ຈັດຕັ້ງປະຕິບັດ) ທີ່ເປັນຈຸດທ້ອນໂຮມຜະລິດຕະພັນໄມ້ກ່ອນການສົ່ງອອກ ເພື່ອພິຈາລະນາອະນຸຍາດການສົ່ງອອກໃນແຕ່ລະຄັ້ງ, ຢ່າງໜ້ອຍ ຫ້າ ວັນ ກ່ອນການສົ່ງອອກ ເພື່ອຮັບປະກັນໃຫ້ທ່ວງທັນກັບກຳນົດເວລາໃນການສົ່ງອອກ ໂດຍມີເອກະສານປະກອບ ດັ່ງນີ້:

1) ຮ່າງໃບອະນຸຍາດສົ່ງອອກຜະລິດຕະພັນໄມ້ທຳມະຊາດ (ອຄ.01) ຕາມແບບພິມຂອງກົມການນຳເຂົ້າ ແລະ ສົ່ງອອກ ທີ່ໄດ້ຕື່ມຂໍ້ມູນຄົບຖ້ວນແລ້ວ;
2) ຮ່າງຕາຕະລາງບັນຊີລາຍການໄມ້ທຳມະຊາດ ຕາມແບບພິມຂອງກົມການນຳເຂົ້າ ແລະ ສົ່ງອອກ ທີ່ໄດ້ຕື່ມຂໍ້ມູນຄົບຖ້ວນແລ້ວ;
3) ສຳເນົາໃບອະນຸຍາດດຳເນີນກິດຈະການຂອງຜູ້ສົ່ງອອກໄມ້ ທີ່ຍັງມີຜົນນຳໃຊ້ໄດ້ (ກໍລະນີທີ່ຍື່ນສະເໜີຄັ້ງທຳອິດ ຫຼື ມີການປ່ຽນແປງ);
4) ສຳເນົາໃບຢັ້ງຢືນການມອບພັນທະອາກອນປະຈຳປີ ທີ່ຍັງມີຜົນນຳໃຊ້ໄດ້ (ກໍລະນີທີ່ຍື່ນສະເໜີຄັ້ງທຳອິດ ຫຼື ມີການປ່ຽນແປງ);
5) ສຳເນົາໃບຢັ້ງຢືນຜະລິດຕະພັນໄມ້ທີ່ຜະລິດໄດ້ພາຍໃນໂຮງງານ ຈາກຂະແໜງອຸດສາຫະກຳ ແລະ ຫັດຖະກຳ (ກໍລະນີທີ່ຍື່ນສະເໜີຄັ້ງທຳອິດ ຫຼື ມີການປ່ຽນແປງ);
6) ເອກະສານຢັ້ງຢືນແຫຼ່ງທີ່ມາຂອງໄມ້;
7) ເອກະສານຢັ້ງຢືນການມອບພັນທະຕ່າງໆ;
8) ເອກະສານຢັ້ງຢືນການຊື້-ຂາຍໄມ້ ກັບ ຜູ້ຊື້ຢູ່ຕ່າງປະເທດ.

2. ການພິຈາລະນາ

ພາຍຫຼັງໄດ້ຮັບເອກະສານສະເໜີຂໍອະນຸຍາດສົ່ງອອກຜະລິດຕະພັນໄມ້ທຳມະຊາດ, ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ຕ້ອງກວດກາຄວາມຖືກຕ້ອງ ແລະ ຄົບຖ້ວນຂອງເອກະສານ ແລ້ວແຈ້ງຕອບຜູ້ສະເໜີຊາບໂດຍທັນທີ ຫຼື ຊ້າສຸດບໍ່ໃຫ້ເກີນ ສາມສິບ ນາທີ. ໃນກໍລະນີເອກະສານບໍ່ຖືກຕ້ອງ ຫຼື ບໍ່ຄົບຖ້ວນ, ຜູ້ກວດກາເອກະສານ ຕ້ອງແຈ້ງຈຸດທີ່ຕ້ອງປັບປຸງແກ້ໄຂ ແລະ ລົງລາຍເຊັນໃສ່ໃບກວດຮັບເອກະສານດັ່ງກ່າວ.

ກໍລະນີເອກະສານຖືກຕ້ອງ ແລະ ຄົບຖ້ວນ, ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ຕ້ອງສົມທົບກັບ ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ແລະ ພະແນກການເງິນແຂວງ, ນະຄອນຫຼວງ ໂດຍປະກອບພະນັກງານ ພາກສ່ວນລະ 01 ທ່ານ ເພື່ອລົງກວດກາຜະລິດຕະພັນໄມ້ທຳມະຊາດທີ່ຈະສົ່ງອອກ ພາຍໃນ ສາມ ວັນລັດຖະການ ນັບແຕ່ມື້ໄດ້ຮັບເອກະສານຄົບຖ້ວນ ແລະ ຖືກຕ້ອງ.

3. ການລົງກວດກາຜະລິດຕະພັນໄມ້ທຳມະຊາດທີ່ຈະສົ່ງອອກ

ການລົງກວດກາຜະລິດຕະພັນໄມ້ທຳມະຊາດທີ່ຈະສົ່ງອອກ ໃຫ້ປະຕິບັດ ຄືດັ່ງນີ້:

1) ການລົງກວດກາ ແມ່ນໃຫ້ກວດກາຕາມຄວາມຮັບຜິດຊອບຂອງຂະແໜງການ ຄື:
   - 1.1 ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ກວດກາຢັ້ງຢືນ ຮູບແບບ, ຂະໜາດ ແລະ ປະເພດຂອງຜະລິດຕະພັນໄມ້ທຳມະຊາດທີ່ຈະສົ່ງອອກ ຕາມໃບຢັ້ງຢືນຜະລິດຕະພັນໄມ້ທີ່ຜະລິດໄດ້ພາຍໃນໂຮງງານ;
   - 1.2 ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ກວດກາຢັ້ງຢືນແຫຼ່ງທີ່ມາຂອງໄມ້, ຊະນິດ, ປະເພດ, ຈຳນວນ, ນ້ຳໜັກ ຫຼື ບໍລິມາດ, ສົມທຽບ ສິນເຂົ້າ ແລະ ສິນອອກຂອງໄມ້;
   - 1.3 ພະແນກການເງິນ ແຂວງ, ນະຄອນຫຼວງ ກວດກາການເສຍພັນທະອາກອນຕ່າງໆ ໃຫ້ຖືກຕ້ອງ ຕາມລະບຽບການຂອງຂະແໜງການເງິນ ແລະ ໜີບກົ່ວ.
2) ຜູ້ລົງກວດກາທັງໝົດ ຕ້ອງລົງລາຍເຊັນໃນປຶ້ມບັນທຶກການລົງກວດກາທຸກຄັ້ງ ແລະ ຕ້ອງຢັ້ງຢືນຄວາມຖືກຕ້ອງຂອງຜະລິດຕະພັນໄມ້ທຳມະຊາດ ທີ່ຈະສົ່ງອອກຕົວຈິງກັບຂໍ້ມູນທີ່ຜູ້ສົ່ງອອກໄດ້ສະໜອງໃຫ້;
3) ໃນກໍລະນີຜ່ານການລົງກວດກາ ເຫັນວ່າຜະລິດຕະພັນໄມ້ທີ່ສະເໜີຂໍສົ່ງອອກ ຫາກບໍ່ຖືກຕ້ອງຕາມເງື່ອນໄຂ ຫຼື ຂໍ້ມູນທີ່ຜູ້ສະເໜີໄດ້ແຈ້ງ, ຜູ້ລົງກວດກາຕ້ອງເຮັດບົດບັນທຶກກັບຜູ້ສະເໜີຂໍສົ່ງອອກ ໂດຍລະບຸເຫດຜົນ ແລະ ດຳເນີນມາດຕະການຕາມລະບຽບການກຳນົດໄວ້;
4) ຜະລິດຕະພັນໄມ້ທຳມະຊາດ ທີ່ຈະສົ່ງອອກຕ້ອງມີການຫຸ້ມຫໍ່ ແລະ ຕິດຂໍ້ມູນສຳຄັນພື້ນຖານ ດັ່ງຕໍ່ໄປນີ້:

- ເລກລຳດັບຂອງຜະລິດຕະພັນ;
- ປະເພດຂອງຜະລິດຕະພັນ;
- ຊະນິດໄມ້;
- ຂະໜາດ;
- ນ້ຳໜັກ ຫຼື ບໍລິມາດ.

ຕົວຢ່າງ: ການຫຸ້ມຫໍ່ ແລະ ໝາຍສັນຍາລັກໃສ່ຜະລິດຕະພັນໄມ້ ທີ່ຈະສົ່ງອອກ






4. ການອອກໃບອະນຸຍາດສົ່ງອອກຜະລິດຕະພັນໄມ້ທໍາມະຊາດ

ພາຍຫຼັງລົງກວດກາ ແລະ ເຫັນວ່າຜະລິດຕະພັນໄມ້ທໍາມະຊາດທີ່ຈະສົ່ງອອກຖືກຕ້ອງກັບຂໍ້ມູນທີ່ຜູ້ສົ່ງອອກໄດ້ສະເໜີ, ພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ ຕ້ອງອອກໃບອະນຸຍາດສົ່ງອອກຜະລິດຕະພັນໄມ້ທໍາມະຊາດ ພາຍໃນ ສອງ ວັນລັດຖະການ ນັບແຕ່ມື້ລົງກວດກາ.

ໃບອະນຸຍາດສົ່ງອອກຜະລິດຕະພັນໄມ້ທໍາມະຊາດ ຕ້ອງເຮັດເປັນ ຫ້າສະບັບ ເພື່ອນໍາສົ່ງໃຫ້ແຕ່ລະພາກສ່ວນ ດັ່ງນີ້:

1) ສະບັບຕົ້ນ ຕິດຕາມກັບຜະລິດຕະພັນໄມ້ທໍາມະຊາດທີ່ຈະສົ່ງອອກ;
2) ໜຶ່ງ ສະບັບສໍາເນົາ ເກັບຮັກສາໄວ້ນໍາ ຜູ້ສົ່ງອອກ;
3) ໜຶ່ງ ສະບັບສໍາເນົາ ເກັບຮັກສາໄວ້ນໍາ ພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ;
4) ໜຶ່ງ ສະບັບສໍາເນົາ ເກັບຮັກສາໄວ້ນໍາ ພະແນກກະສິກໍາ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ;
5) ໜຶ່ງ ສະບັບສໍາເນົາ ເກັບຮັກສາໄວ້ນໍາ ພະແນກການເງິນ ແຂວງ, ນະຄອນຫຼວງ.

**5. ການຂໍໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າ (CO)**

ຜູ້ສົ່ງອອກທີ່ຕ້ອງການຂໍໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າ (CO) ສາມາດນໍາໃຊ້ໃບອະນຸຍາດສົ່ງອອກຜະລິດຕະພັນໄມ້ທໍາມະຊາດ ເພື່ອເປັນເອກະສານປະກອບໃນການອອກໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າ ຕາມລະບຽບການຢັ້ງຢືນແຫຼ່ງກໍາເນີດສິນຄ້າ ທີ່ ກະຊວງອຸດສາຫະກໍາ ແລະ ການຄ້າ ປະກາດໃຊ້ໃນແຕ່ລະໄລຍະ.

## IV. ການແຈ້ງເອກະສານຢູ່ດ່ານເພື່ອສົ່ງອອກຜະລິດຕະພັນໄມ້ທໍາມະຊາດ

ການສົ່ງອອກຜະລິດຕະພັນໄມ້ທໍາມະຊາດໄປຕ່າງປະເທດ ຕ້ອງສົ່ງອອກຜ່ານດ່ານສາກົນເທົ່ານັ້ນ. ພາຍຫຼັງໄດ້ຮັບໃບອະນຸຍາດສົ່ງອອກຜະລິດຕະພັນໄມ້ທໍາມະຊາດ, ຜູ້ສົ່ງອອກສາມາດແຈ້ງເອກະສານຕໍ່ເຈົ້າໜ້າທີ່ປະຈໍາດ່ານ ບ່ອນທີ່ຈະສົ່ງອອກໄມ້ ໂດຍປະກອບເອກະສານ ຄືດັ່ງນີ້:

1. ໃບອະນຸຍາດສົ່ງອອກຜະລິດຕະພັນໄມ້ທໍາມະຊາດ (ອຄ.01) ສະບັບຕົ້ນ 1 ຊຸດ;
2. ລາຍການຜະລິດຕະພັນໄມ້ທໍາມະຊາດສົ່ງອອກ ສະບັບຕົ້ນ 1 ຊຸດ;
3. ເອກະສານປະກອບຕາມທີ່ລະບຸໄວ້ໃນກົດໝາຍວ່າດ້ວຍພາສີ.

## V. ຄ່າທໍານຽມ, ຄ່າບໍລິການ ແລະ ພັນທະດ້ານພາສີ-ອາກອນ

ການເກັບຄ່າທໍານຽມ ແລະ ຄ່າບໍລິການ ທີ່ຕິດພັນກັບການສົ່ງອອກໄມ້ທໍາມະຊາດ ແມ່ນໃຫ້ປະຕິບັດຕາມລັດຖະບັນຍັດ ວ່າດ້ວຍຄ່າທໍານຽມ ແລະ ຄ່າບໍລິການ ທີ່ໄດ້ປະກາດໃຊ້ໃນແຕ່ລະໄລຍະ.

ການປະຕິບັດພັນທະດ້ານພາສີ-ອາກອນໃນການສົ່ງອອກໄມ້ທໍາມະຊາດ ແມ່ນໃຫ້ປະຕິບັດຕາມທີ່ກໍານົດໄວ້ໃນກົດໝາຍວ່າດ້ວຍພາສີ, ກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ ແລະ ລະບຽບກົດໝາຍອື່ນ ທີ່ປະກາດໃຊ້ໃນແຕ່ລະໄລຍະ.

## VI. ສິດ ແລະ ໜ້າທີ່ຂອງເຈົ້າໜ້າທີ່ລັດ

ໃນການຈັດຕັ້ງປະຕິບັດວຽກງານການສົ່ງອອກຜະລິດຕະພັນໄມ້ທໍາມະຊາດ ເຈົ້າໜ້າທີ່ກ່ຽວຂ້ອງຂອງພາກລັດ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ກວດກາ, ປະເມີນ ແລະ ຢັ້ງຢືນຄວາມສອດຄ່ອງໃນການຄຸ້ມຄອງແຫຼ່ງທີ່ມາ ແລະ ຄວາມຖືກຕ້ອງ ຂອງໄມ້;
2. ກວດກາ ແລະ ອອກໃບອະນຸຍາດສົ່ງອອກຜະລິດຕະພັນໄມ້ທໍາມະຊາດ;

3. ຈັດກອງປະຊຸມປຶກສາຫາລື ກັບ ພາກລັດ ແລະ ທຸລະກິດ ກ່ຽວກັບວຽກງານການສົ່ງອອກຜະລິດຕະພັນໄມ້ທໍາມະຊາດ;
4. ເຜີຍແຜ່, ແນະນໍາ ແລະ ອໍານວຍຄວາມສະດວກ ໃນແຕ່ລະຂັ້ນຕອນຂອງການສົ່ງອອກຜະລິດຕະພັນໄມ້ທໍາມະຊາດ ບົນພື້ນຖານຄວາມຖືກຕ້ອງ ແລະ ສອດຄ່ອງກັບກົດໝາຍ ແລະ ນິຕິກໍາ ທີ່ວາງອອກໃນແຕ່ລະໄລຍະ;
5. ເກັບຮັກສາ ແລະ ສະໜອງຂໍ້ມູນການສົ່ງອອກ ໃຫ້ແຕ່ລະຂະແໜງການ ຕາມພາລະບົດບາດຂອງຕົນ;
6. ດໍາເນີນການກວດກາໃນກໍລະນີທີ່ມີຂໍ້ສົງໄສ ຫຼື ມີແຫຼ່ງຂ່າວທີ່ເຊື່ອຖືໄດ້ວ່າ ຈະມີການລັກລອບ, ເຄື່ອນຍ້າຍເອົາໄມ້ທີ່ບໍ່ມີແຫຼ່ງທີ່ມາຖືກຕ້ອງ ປະປົນກັບຜະລິດຕະພັນໄມ້ທໍາມະຊາດ ທີ່ໄດ້ຮັບອະນຸຍາດໃຫ້ສົ່ງອອກ ຫຼື ພົບເຫັນວ່າຜະລິດຕະພັນໄມ້ທໍາມະຊາດທີ່ຈະສົ່ງອອກ ອາດບໍ່ຖືກຕ້ອງສອດຄ່ອງກັບໃບອະນຸຍາດສົ່ງອອກຜະລິດຕະພັນໄມ້ທໍາມະຊາດ;
7. ໃນກໍລະນີພົບເຫັນການລະເມີດ, ເຈົ້າໜ້າທີ່ກ່ຽວຂ້ອງ ສາມາດກັກສິນຄ້າ (ຜະລິດຕະພັນໄມ້ທໍາມະຊາດ), ພາຫະນະຂົນສົ່ງໄວ້ ແລະ ຜູ້ຖືກສົງໃສ ເພື່ອດໍາເນີນການສືບສວນ-ສອບສວນເບື້ອງຕົ້ນ, ກ່ອນທີ່ຈະນໍາ ສົ່ງສໍານວນໃຫ້ເຈົ້າໜ້າທີ່ກວດກາປ່າໄມ້ເປັນຜູ້ດໍາເນີນການສືບສວນ-ສອບສວນຢ່າງລະອຽດ ຕາມພາລະບົດບາດ;
8. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງ ຂັ້ນເທິງ ແລະ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

## VII. ສິດ ແລະ ພັນທະຂອງຜູ້ສົ່ງອອກ

ຜູ້ສົ່ງອອກ ມີສິດ ແລະ ພັນທະ ດັ່ງນີ້:

1. ສະເໜີຂໍໃບອະນຸຍາດສົ່ງອອກຜະລິດຕະພັນໄມ້ທໍາມະຊາດ ກັບ ພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ ບ່ອນທີ່ເປັນຈຸດທ້ອນໂຮມໄມ້ກ່ອນສົ່ງອອກ;
2. ລາຍງານການປະຕິບັດໜ້າທີ່ ຂອງເຈົ້າໜ້າທີ່ລັດ ທີ່ບໍ່ສອດຄ່ອງ ຫຼື ລະເມີດກົດໝາຍ ແລະ ລະບຽບການ ຫຼື ໃນກໍລະນີທີ່ບໍ່ໄດ້ຮັບການອໍານວຍຄວາມສະດວກໃນການສົ່ງອອກ;
3. ສະໜອງເອກະສານ ແລະ ຂໍ້ມູນທີ່ຖືກຕ້ອງຕາມຄວາມເປັນຈິງ ໃນເວລາທີ່ສະເໜີຂໍອະນຸຍາດສົ່ງອອກຜະລິດຕະພັນໄມ້ທໍາມະຊາດ;
4. ເກັບຮັກສາສໍາເນົາເອກະສານທີ່ຕິດພັນ ກັບ ການສົ່ງອອກຜະລິດຕະພັນໄມ້ທໍາມະຊາດ ເຊັ່ນ ໃບອະນຸຍາດສົ່ງອອກຜະລິດຕະພັນໄມ້ທໍາມະຊາດ, ໃບແຈ້ງພາສີຂາອອກ, ເອກະສານຢັ້ງຢືນແຫຼ່ງທີ່ມາຂອງຜະລິດຕະພັນໄມ້ທໍາມະຊາດ ແລະ ສັນຍາຊື້-ຂາຍໄມ້ ໄວ້ເປັນເວລາຢ່າງໜ້ອຍ ຫ້າ ປີ;
5. ເກັບກໍາຂໍ້ມູນການສົ່ງອອກຜະລິດຕະພັນໄມ້ທໍາມະຊາດ ຕາມແບບພິມ ແລະ ວິທີການ ທີ່ໄດ້ກໍານົດໄວ້ໃນ ລະບຽບການວ່າດ້ວຍການຄຸ້ມຄອງ ແລະ ຕິດຕາມ ໄມ້ລົ້ມເຂົ້າ ແລະ ລົ້ມອອກ;
6. ລາຍງານຂໍ້ມູນການສົ່ງອອກຜະລິດຕະພັນໄມ້ທໍາມະຊາດ ໃຫ້ພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ ທີ່ອະນຸຍາດສົ່ງອອກຜະລິດຕະພັນໄມ້ທໍາມະຊາດໃຫ້ຕົນ ຕາມແບບພິມ ແລະ ກໍານົດເວລາ ທີ່ລະບຸໄວ້ໃນລະບຽບການວ່າດ້ວຍການຄຸ້ມຄອງ ແລະ ຕິດຕາມ ໄມ້ລົ້ມເຂົ້າ ແລະ ລົ້ມອອກ;
7. ແຈ້ງໃຫ້ ພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ ຊາບ ເພື່ອລົບລ້າງໃບອະນຸຍາດສົ່ງອອກຜະລິດຕະພັນໄມ້ທໍາມະຊາດ ທີ່ໄດ້ອອກໃຫ້ແລ້ວ ໃນກໍລະນີຜະລິດຕະພັນໄມ້ທໍາມະຊາດທີ່ໄດ້ຮັບອະນຸຍາດ ບໍ່ໄດ້ຖືກສົ່ງອອກ;

8. ຮັບຜິດຊອບໂດຍກົງຕໍ່ທຸກການກະທຳຜິດ ຫຼື ການລະເມີດ ກົດໝາຍ ແລະ ລະບຽບການ ຂອງຕົນທີ່ເກີດຂຶ້ນ ພາຍຫຼັງທີ່ໄດ້ຮັບໃບອະນຸຍາດສົ່ງອອກຜະລິດຕະພັນໄມ້ທຳມະຊາດ;
9. ນຳໃຊ້ສິດ ແລະ ປະຕິບັດພັນທະອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## VIII. ມາດຕະການຕໍ່ຜູ້ລະເມີດ

### 1. ມາດຕະການຕໍ່ເຈົ້າໜ້າທີ່ລັດ

ເຈົ້າໜ້າທີ່ລັດທີ່ຮັບຜິດຊອບໃນການກວດກາ ແລະ ຢັ້ງຢືນການສົ່ງອອກຜະລິດຕະພັນໄມ້ທຳມະຊາດ ຫາກມີພຶດຕິກຳ ແກ່ຍາວເວລາ ຫຼື ຖ່ວງດຶງເອກະສານ ດ້ວຍເຫດຜົນບໍ່ພຽງພໍ ເພື່ອຮຽກຮ້ອງເອົາຜົນປະໂຫຍດຈາກຜູ້ຂໍສົ່ງອອກ ໂດຍບໍ່ຖືກຕ້ອງຕາມລະບຽບຫຼັກການ ຫຼື ສົມຮູ້ຮ່ວມຄິດກັບຜູ້ຂໍສົ່ງອອກ ປອມແປງເອກະສານ, ປົກບັງຂໍ້ມູນຄວາມຈິງຂອງການສົ່ງອອກ ຈະຖືກປະຕິບັດວິໄນ ແລະ ມາດຕະການຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ກຳນົດໄວ້.

### 2. ມາດຕະການຕໍ່ຜູ້ສົ່ງອອກ

ຜູ້ສົ່ງອອກ ຫາກມີພຶດຕິກຳ ເຊັ່ນ: ການປອມແປງໃບຢັ້ງຢືນ, ບິດເບືອນ ຫຼື ແຈ້ງຂໍ້ມູນທີ່ບໍ່ຖືກຕ້ອງຕາມຄວາມເປັນຈິງ, ການລັກລອບ, ເຄື່ອນຍ້າຍເອົາໄມ້ທີ່ບໍ່ມີແຫຼ່ງທີ່ມາຖືກຕ້ອງ ປະປົນກັບຜະລິດຕະພັນໄມ້ທຳມະຊາດທີ່ໄດ້ຮັບອະນຸຍາດ ໃຫ້ສົ່ງອອກ ຫຼື ພົບເຫັນວ່າຜະລິດຕະພັນໄມ້ທຳມະຊາດທີ່ຈະສົ່ງອອກ ອາດບໍ່ຖືກຕ້ອງສອດຄ່ອງກັບໃບອະນຸຍາດສົ່ງອອກຜະລິດຕະພັນໄມ້ທຳມະຊາດ ແມ່ນຈະຖືກປະຕິບັດມາດຕະການຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງກຳນົດໄວ້.

## IX. ການຈັດຕັ້ງປະຕິບັດ

ມອບໃຫ້ ກົມການນຳເຂົ້າ ແລະ ສົ່ງອອກ ເປັນເຈົ້າການປະສານສົມທົບກັບ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ, ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ, ນະຄອນ ແລະ ພາກສ່ວນທີ່ກ່ຽວຂ້ອງ ເຜີຍແຜ່ ແລະ ຈັດຕັ້ງປະຕິບັດຄຳແນະນຳສະບັບນີ້ ໃຫ້ໄດ້ຮັບຜົນດີ.

## X. ຜົນສັກສິດ

ຄຳແນະນຳສະບັບນີ້ ມີຜົນສັກສິດພາຍຫຼັງລົງລາຍເຊັນ ແລະ ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າ ວັນ.

ຄຳແນະນຳສະບັບນີ້ ນຳໃຊ້ປ່ຽນແທນ ຄຳສັ່ງແນະນຳວ່າດ້ວຍຂັ້ນຕອນການຢັ້ງຢືນຜະລິດຕະພັນໄມ້ທຳມະຊາດຂັ້ນລຶດເພື່ອສົ່ງອອກໄປຕ່າງປະເທດ ສະບັບເລກທີ 2143/ອຄ.ກຂອ, ລົງວັນທີ 25 ພະຈິກ 2016.

ລັດຖະມົນຕີ ໑໒

ປອ.ຄຳແພງ ໄຊສົມແພງ

<u>ເອກະສານຊ້ອນທ້າຍ 1</u> : ໃບອະນຸຍາດສົ່ງອອກຜະລິດຕະພັນໄມ້ທຳມະຊາດ (ອຄ.01)

ອຄ.01/MOIC.01

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
**LAO PEOPLE'S DEMOCRATIC REPUBLIC**
**PEACE INDEPENDENCE DEMOCRACY UNITY PROSPERITY**

ພະແນກການອຸດສາຫະກຳ ແລະ ການຄ້າແຂວງ ............................
**Department of Industry and Commerce of ...............**

ເລກທີ / ***Ref.no:*** /ອຄ...............
**/DOIC..........**

ລົງວັນທີ / *Date:*

# ໃບອະນຸຍາດສົ່ງອອກຜະລິດຕະພັນໄມ້ທຳມະຊາດ

## *Export License for timber products*

| 1. ຂໍ້ມູນຂອງຜູ້ສົ່ງ / *Consignor's information* | | 2. ຂໍ້ມູນຂອງຂອງຜູ້ຮັບ / *Consignee's information* | |
|---|---|---|---|
| ຊື່ / *Name:* | | ຊື່ / *Name:* | |
| ທີ່ຢູ່ / *Address:* | | ທີ່ຢູ່ / *Address:* | |
| ຂໍ້ມູນຕິດຕໍ່ / *Contact:* | | ຂໍ້ມູນຕິດຕໍ່ / *Contact:* | |
| 3. ຕົ້ນກຳເນີດຂອງສິນຄ້າ / *Origin:* | | 4. ປາຍທາງຂອງສິນຄ້າ / *Destination:* | |
| 5. ວິທີການການຂົນສົ່ງ / Means of transport<br>☐ ທາງລົດ / by car ☐ ທາງອາກາດ / by air ☐ ທາງລົດໄຟ / by train | | 6. ດ່ານສົ່ງອອກ / *Exit point*: | |

7. ຂໍ້ມູນຂອງສິນຄ້າ / Product (s) information

| ລຳດັບ *No.* | ລາຍການສິນຄ້າ ແລະ ລະຫັດພາສີ *Product(s) description and HS code* | ຊື່ວິທະຍາສາດ *Scientific name* | ຊື່ທ້ອງຖິ່ນ *Local specie name* | ຈຳນວນ *Amount* | ບໍລິມາດ *Volume (ມ3 / m3)* | ນ້ຳໜັກ *Weight* (ໂຕນ / *t*) | ມູນຄ່າ *Value/USD* |
|---|---|---|---|---|---|---|---|
| | | | | | | | |
| <u>*ລວມທັງໝົດ / Total*</u> | | | | | | | |

| | | | |
|---|---|---|---|
| 8. ເອກະສານຢັ້ງຢືນ *CITES* ອອກໃຫ້ໂດຍ / *CITES issued by:* | | | |
| *ເລກທີ / Ref.no:* | | ວັນທີ /*Date:* | |

ນຳໃຊ້ໄດ້ຮອດວັນທີ / *valid until:* .....................................

ໝາຍເຫດ / **Remarks:**

1. ຜູ້ທີ່ໄດ້ຮັບອະນຸຍາດຕ້ອງໄດ້ຮັບຜິດຊອບຕໍ່ຂໍ້ມູນທີ່ລະບຸໄວ້ໃນໃບອະນຸຍາດສະບັບນີ້
   *Submission of false information shall result in penalties.*
2. ຫ້າມບໍ່ໃຫ້ມີຮອຍລົບ, ຮອຍພິມທັບໃສ່ ຫຼື ຮອຍຂີດຂ້າຢ່າງເດັດຂາດ
   *All information must be typed without any correction or modifications.*
3. ການໂອນ ຫຼື ມອບໃບອະນຸຍາດສະບັບນີ້ໃຫ້ຜູ້ອື່ນນຳໃຊ້ໂດຍບໍ່ໄດ້ຮັບອະນຸຍາດ ຖືເປັນການລະເມີດຕໍ່ກົດໝາຍ.
   *Transfer of this license to other user without authorization shall be illegal*

ພະແນກການອຸດສາຫະກຳ ແລະ ການຄ້າແຂວງ..............
**Department of Industry and Commerce of ......**

1/2

# *ບົດບັນທຶກການກວດກາຜະລິດຕະພັນໄມ້ທໍາມະຊາດເພື່ອສົ່ງອອກ*

*1. ຂໍ້ມູນທົ່ວໄປ*

*ວັນ / ເດືອນ / ປີ ລົງກວດກາ:* ............................................ *ເວລາ:* ............................................

*ສະຖານທີ່ລົງກວດກາ:* ............................................ *ໂດຍຊ່ອງໜ້າ:* ............................................

*ບ້ານ* ............................................ *ຊື່* ............................................

*ເມືອງ* ............................................ *ຕໍາແໜ່ງ* ............................................

*ແຂວງ* ............................................ *ເບີໂທ* ............................................

2. ຂໍ້ມູນການຂົນສົ່ງ

ຍີ່ຫໍ້ລົດ: ............................................ ເລກທະບຽນລົດ: ............................................

ເລກທະບຽນຫາງພ່ວງ (ຖ້າມີ) ............................................ ຮູບແບບການຂົນສົ່ງ: ☐ ຕູ້ຄອນເທັນເນີ ☐ ປົກຜ້າບັດ

ສົ່ງອອກໄປປະເທດ ............................................ ຜ່ານດ່ານ ............................................

3. ການໜີບກົ່ວ: ໄດ້ໜີບກົ່ວ: ຈໍານວນ ............. ຈຸດ, ລາຍລະອຽດມີດັ່ງຕໍ່ໄປນີ້:

ຈຸດທີ **1:** ເລກລະຫັດກົ່ວ ............................................ ຈຸດທີ **7:** ເລກລະຫັດກົ່ວ ............................................

ຈຸດທີ **2:** ເລກລະຫັດກົ່ວ ............................................ ຈຸດທີ **8:** ເລກລະຫັດກົ່ວ ............................................

ຈຸດທີ **3:** ເລກລະຫັດກົ່ວ ............................................ ຈຸດທີ **9:** ເລກລະຫັດກົ່ວ ............................................

ຈຸດທີ **4:** ເລກລະຫັດກົ່ວ ............................................ ຈຸດທີ **10:** ເລກລະຫັດກົ່ວ ............................................

ຈຸດທີ **5:** ເລກລະຫັດກົ່ວ ............................................ ຈຸດທີ **11:** ເລກລະຫັດກົ່ວ ............................................

ຈຸດທີ **6:** ເລກລະຫັດກົ່ວ ............................................ ຈຸດທີ **12:** ເລກລະຫັດກົ່ວ ............................................

ຄະນະກໍາມະການ ໄດ້ກວດສອບ ຊະນິດ, ປະເພດ, ຈໍານວນ, ນໍ້າໜັກ ແລະ ບໍລິມາດຕົວຈິງ ຂອງ ໄມ້ທີ່ຈະສົ່ງອອກຕ່າງປະເທດ ແລ້ວ ເຫັນວ່າຖືກຕ້ອງຕາມ ຂໍ້ມູນທີ່ຜູ້ສະເໜີຂໍສົ່ງອອກໄດ້ສະໜອງໃຫ້ຄະນະກໍາມະການ. ດັ່ງນັ້ນ, ຄະນະກໍາມະການ ແລະ ຜູ້ສົ່ງອອກ ຫຼື ຜູ້ຕາງໜ້າຜູ້ສົ່ງອອກ ຈຶ່ງເຫັນດີເປັນເອກະພາບພ້ອມກັນລົງລາຍເຊັນໄວ້ ເພື່ອນໍາໃຊ້ປະກອບໃຫ້ແກ່ການສົ່ງອອກໄມ້ ຕາມທີ່ໄດ້ລະບຸໄວ້ໃນລາຍການຜະລິດຕະພັນໄມ້ທໍາມະຊາດເພື່ອສົ່ງອອກທີ່ໄດ້ຄັດຕິດມາພ້ອມນີ້ ແລະ ເພື່ອເປັນຫຼັກຖານໃຫ້ເຈົ້າໜ້າທີ່ກ່ຽວຂ້ອງກວດສອບ. ໃນກໍລະນີກວດພົບເຫັນ ມີການເອົາໄມ້ຈາກແຫຼ່ງອື່ນມາປົນ ຫຼື ມີໄມ້ທ່ອນ ແລະ ຜະລິດຕະພັນໄມ້ ທີ່ບໍ່ສອດຄ່ອງກັບໃບອະນຸຍາດສະບັບນີ້, ຜູ້ສົ່ງອອກ ແລະ ຜູ້ຂົນສົ່ງ ມີຄວາມຮັບຜິດຊອບຕໍ່ການພົບເຫັນດັ່ງກ່າວ ແລະ ຈະຖືກດໍາເນີນມາດຕະການ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງວາງອອກ.

*ຄໍາປະຕິຍານຂອງຜູ້ສົ່ງອອກ / Declaration of Exporter*

ຂ້າພະເຈົ້າ, ຂໍຢັ້ງຢືນວ່າທຸກຂໍ້ມູນທີ່ລະບຸໃນເອກະສານນີ້ມີຄວາມຖືກຕ້ອງກັບຄວາມເປັນຈິງທຸກປະການ, ຖ້າຫາກມີການແຈ້ງຂໍ້ມູນທີ່ບໍ່ຖືກຕ້ອງ ແລະ ບໍ່ເປັນຈິງ, ຫຼື ຫາກກວດພົບເຫັນຄວາມບໍ່ສອດຄ່ອງຂອງສິນຄ້າທີ່ສົ່ງອອກຕົວຈິງພາຍຫຼັງທີ່ໄດ້ຮັບໃບອະນຸຍາດສະບັບນີ້ ແມ່ນຈະຖືເປັນການກະທໍາຜິດ ແລະ ຂ້າພະເຈົ້າຍິນຍອມຮັບຜິດຊອບຕາມກົດໝາຍ ແລະ ລະບຽບການຂອງ ສປປ ລາວ ທີ່ໄດ້ວາງອອກ.

ລາຍເຊັນ, ຊື່ແຈ້ງ ແລະ ປະທັບກາ

______________________________

ເຊັນເຈົ້າໜ້າທີ່ຜູ້ລົງກວດກາໄມ້ຕົວຈິງ / ***Signature of the inspectors***

1. ພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ

ລາຍເຊັນ ແລະ ຊື່ແຈ້ງ

______________________________

2. ພະແນກກະສິກໍາ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ

ລາຍເຊັນ ແລະ ຊື່ແຈ້ງ

______________________________

3. ພະແນກການເງິນ ແຂວງ, ນະຄອນຫຼວງວຽງຈັນ

ລາຍເຊັນ ແລະ ຊື່ແຈ້ງ

______________________________

2/2

ເອກະສານຊ້ອນທ້າຍ 2 : ລາຍການຜະລິດຕະພັນໄມ້ທຳມະຊາດເພື່ອສົ່ງອອກ

## ລາຍການຜະລິດຕະພັນໄມ້ທຳມະຊາດເພື່ອສົ່ງອອກ
## *List of the timber products to be exported*

**1. ຂໍ້ມູນການຂົນສົ່ງ / *Transportation Information***

| | | | | |
|---|---|---|---|---|
| 1.1 | *ທາງລົດ / by car* | ເລກທະບຽນ / *plate number:* | ຍີ່ຫໍ້ລົດ<br>*Brand* | |
| 1.2 | *ທາງອາກາດ / by air* | ຖ້ຽວບິນ / *flight number:* | ສາຍການບິນ/ເວລາ<br>*Airline / departure time* | |
| 1.3 | *ທາງລົດໄຟ / bytrain* | ຖ້ຽວລົດໄຟ / *train no:* | ຊື່ຂະບວນລົດໄຟ/ເວລາ<br>*Train name / departure time* | |

**2. ລາຍລະອຽດຂອງຜະລິດຕະພັນ / *Product(s) description***

| ລຳດັບ<br>No. | ລະຫັດພາສີ<br>HS Code | *ປະເພດຜະລິດຕະພັນໄມ້*<br>*Timber product (s)* | ຊື່ທ້ອງຖິ່ນ<br>*Local specie name* | ຊື່ວິທະຍາສາດ<br>*Scientific name* | ຂະໜາດ (ຊມ)<br>*Size (cm)* | | | ບໍລິມາດ<br>*Volume* | ນ້ຳໜັກ<br>*Weight* | *CITES* | *ໝາຍເຫດ*<br>*Remarks* |
|---|---|---|---|---|---|---|---|---|---|---|---|
| | | | | | ຄວາມໜາ<br>*Thickness* | *ກວ້າງ*<br>*Width* | ຍາວ<br>*Length* | *ມ3 (m3)* | *ໂຕນ (t)* | | |
| | | | | | | | | | | | |
| | | | | | | | | | | | |
| | | | | | | | | | | | |
| | | | | | | | | | | | |
| | | | | | | | | | | | |

**3. ການຢັ້ງຢືນຮັບຮູ້ / *Acknowledgement***

ທີ່/*At*____________________, ລົງວັນທີ/*Date*____/____/______

ເຊັນຜູ້ສົ່ງອອກ /*Exporter:*________________________ ເຊັນຜູ້ຂຶ້ນບັນຊີ / *Prepared by:*________________________

1/1